**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ
ຄະນະປະຈຳ

ເລກທີ 81 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 15 / 05 / 19

# ມະຕິ

## ຂອງຄະນະປະຈຳສະພາແຫ່ງຊາດ

## ວ່າດ້ວຍການຕີຄວາມໝາຍ ມາດຕາ 35 ຂໍ້ 2 ຂີດໜ້າ 4

## ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງປີ 2015) ມາດຕາ 56 ຂໍ້ 2 ສະເໜີສ້າງ, ຕີຄວາມໝາຍ, ອະທິບາຍ ລັດຖະທຳມະນູນ ແລະ ກົດໝາຍ;
- ອີງຕາມ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 9 ທັນວາ 2015 ມາດຕາ 33 ສິດ ແລະ ໜ້າທີ່ ຂອງຄະນະປະຈຳສະພາແຫ່ງຊາດ ຂໍ້ 1.1 ຕີຄວາມໝາຍ ແລະ ອະທິບາຍ ລັດ ຖະ ທຳມະນູນ, ກົດໝາຍ;
- ອີງຕາມໜັງສືສະເໜີ ຂອງລັດຖະບານ ສະບັບເລກທີ 28/ລບ, ລົງວັນທີ 13 ມີນາ 2019.

ຜ່ານການຄົ້ນຄວ້າ, ພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຂອງຄະນະປະຈຳສະພາແຫ່ງຊາດ ຕໍ່ໜັງສືສະ ເໜີຂອງລັດຖະບານ.

**ຄະນະປະຈຳສະພາແຫ່ງຊາດ ຕົກລົງ:**

**ມາດຕາ 1 ຕີຄວາມໝາຍ**

ຕີຄວາມໝາຍຄຳວ່າ "ຄ່າໂຄສະນາ" ທີ່ກຳນົດໃນ ຂີດໜ້າ 4 ຂໍ້ 2 ມາດຕາ 35 ຂອງກົດໝາຍວ່າດ້ວຍສ່ວຍສາ ອາກອນ ສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015 ໝາຍເຖິງ:

1. ຄ່າສະໜັບສະໜູນການຕະຫຼາດໃຫ້ກັບລູກຄ້າ;
2. ຄ່າເຄື່ອງໂຄສະນາສະເພາະກິດຈະກຳ;
3. ຄ່າໂຄສະນາດ້ວຍຮູບການຈັດກິດຈະກຳໃນງານ ຫຼື ເທດສະການຕ່າງໆ;
4. ຄ່າອອກແບບເຄື່ອງໂຄສະນາ;
5. ຄ່າເຄື່ອງໂຄສະນາແບບມາດຕະຖານທົ່ວໄປ;
6. ຄ່າໂຄສະນາຜ່ານສື່ ໂທລະພາບ, ໂທລະສັບ, ວິທະຍຸ, ອິນເຕີເນັດ, ສິ່ງພິມ, ປ້າຍ;
7. ຄ່າໂຄສະນາທາງຮູບເງົາ;

8. ຄ່າເພັງໂຄສະນາ;

9. ຄ່າໂຄສະນານອກສະຖານທີ່;

10. ຄ່າວາງສະແດງຜະລິດຕະພັນ;

11. ຄ່າເຜີຍແຜ່ໂຄສະນາຕໍ່ສັງຄົມ;

12. ຄ່າຜະລິດຕະພັນປະກອບສາກເພື່ອການໂຄສະນາ;

13. ຄ່າສະໜັບສະໜູນວັດທະນະທຳໂຄສະນາ;

14. ຄ່າເຄື່ອງຊຸດບັດລຸ້ນໂຊກ;

15. ຄ່າເຄື່ອງລີງຈັດກິດຈະກຳ;

16. ຄ່າສິ່ງເສີມການຂາຍຜະລິດຕະພັນ ດ້ວຍການໃຫ້ລ້າ.

**ມາດຕາ 2** ມະຕິສະບັບນີ້ ມີຄຸນຄ່າໃຊ້ໄດ້ຄືກັນກັບກົດໝາຍ.

**ມາດຕາ 3** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຄະນະປະຈຳສະພາແຫ່ງຊາດ

ປະທານ

ປານີ ຢາທໍ່ຕູ້